ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເລກທີ 470 /ກສປ

ນະຄອນຫຼວງວຽງຈັນ, ວັນທີ 15 ຕຸລາ 2025

ແຈ້ງການ

ເລື່ອງ: ແຈ້ງການ ກ່ຽວກັບການປິດຮັບບົດສະເໜີໂຄງການທຶນພາຍໃນ ປະຈຳປີ 2025 ຂອງຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້.

- ອີງຕາມ ຂໍ້ຕົກລົງ ຂອງປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ວ່າດ້ວຍ ການຮັບຮອງເອົາບົດສະຫຼຸບການຈັດຕັ້ງປະຕິບັດວຽກງານ 5 ປີ (2016-2020) ແລະ ທິດທາງຕັ້ນການ 5 ປີ (2021-2025) ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 07/ກປສ.ສພ, ລົງວັນທີ 09 ມິຖຸນາ 2021;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຮັບຮອງ ຄຳແນະນຳ ວ່າດ້ວຍນະໂຍບາຍການສະໜອງທຶນພາຍໃນຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 13/ກປສ.ສພ, ລົງວັນທີ 06 ກໍລະກົດ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ສະບັບເລກທີ 1259/ກສ ລົງວັນທີ 12 ກັນຍາ 2025.

ຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຂໍຖືເປັນກຽດແຈ້ງມາຍັງທ່ານທຸກພາກສ່ວນ ຊາບວ່າ: ຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຈະໄດ້ປິດຮັບເອກະສານບົດສະເໜີໂຄງການ 6 ຮ່ວງທຶນຕາມແຜນການສະໜອງທຶນ ທີ່ໄດ້ເປີດຮັບບົດສະເໜີໂຄງການ ຈາກພາກສ່ວນຕ່າງໆ ແຕ່ວັນທີ 1 ມັງກອນ 2025 ແລະ ໄດ້ປິດຮັບ ໃນວັນທີ 30 ກັນຍາ 2025. ສ່ວນການເປີດຮັບບົດສະເໜີໂຄງການໃໝ່ ແມ່ນຈະເລີ່ມຕົ້ນ ແຕ່ວັນທີ 1 ມັງກອນ 2026 ແລະ ຈະມີການແຈ້ງການເພີ່ມຕື່ມ ອີກຄັ້ງໜຶ່ງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ພິຈາລະນາຕາມເຫັນສົມຄວນດ້ວຍ.

ຫົວໜ້າ ຫ້ອງການກອງທຶນ

ພັດນະຄອນ ຄັນທະມີໄຊ

ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ, ເຂດນາໄຮ່ດຽວ
ຕຶກ 100, ຊັ້ນ 2, ຕູ້ປນ: 7647, ໂທລະສັບ: 252739, ແຟັກ: 251946